ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

................oOo.................

ລັດຖະບານແຫ່ງ ສປປ ລາວ

ເລກທີ..01..../ລບ

ນະຄອນຫຼວງວຽງຈັນ, ວັນທີ..22../..6../2012

# ແຜນຍຸດທະສາດແຫ່ງຊາດ
# ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກ ສຳລັບປີ 2011 ເຖິງ 2020
# "ເສັ້ນທາງກ້າວສູ່ຄວາມປອດໄພ II"

## ພາກ I: ບ່ອນອີງ.

1. ເປົ້າໝາຍ ຂອງແຜນຍຸດທະສາດສະບັບນີ້ ແມ່ນເພື່ອປະກອບສ່ວນໃຫ້ບັນລຸເປົ້າໝາຍສະຫັດສະວັດ ເພື່ອການພັດທະນາ ແລະ ບັນດາເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ດັ່ງລະບຸຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສອດຄ່ອງກັບຫຼັກການ ຂອງຖະແຫຼງການວຽງຈັນ ວ່າດ້ວຍຄວາມມີປະສິດທິຜົນຂອງການຊ່ວຍເຫຼືອ. ພ້ອມກັນນັ້ນ, ເປົ້າໝາຍຂອງແຜນຍຸດທະສາດສະບັບນີ້ ກໍເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດບັນດາສົນທິສັນຍາ[1] ແລະ ຖະແຫຼງການສາກົນຕ່າງໆ, ໃນນັ້ນ ລວມມີ:

- ສົນທິສັນຍາ ວ່າດ້ວຍ ການເກືອດຫ້າມລະເບີດລູກຫວ່ານ (ລະເບີດບົມບີ).
- ສົນທິສັນຍາ ກ່ຽວກັບ ສິດທິຂອງຄົນພິການ.
- ຖະແຫຼງການ ຢູເອັນເອັດສ໌ແຄັບ ກ່ຽວກັບ ທົດສະວັດແຫ່ງຄົນພິການ.

2. ແຜນຍຸດທະສາດສະບັບນີ້ສອດຄ່ອງກັບນິຕິກຳຕ່າງໆ ຂອງລັດຖະບານ ດັ່ງລຸ່ມນີ້:

- ດຳລັດເລກທີ 406/ນຍ, ລົງວັນທີ 8 ພະຈິກ 2011 ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).
- ດຳລັດເລກທີ 61/ນຍ, ລົງວັນທີ 16 ມີນາ 2009 ວ່າດ້ວຍກຳມະທິການແຫ່ງຊາດເພື່ອຄົນພິການ.

[1] ຄຳສັບ "ຂໍ້ຕົກລົງ" ແມ່ນຖືກໃຊ້ປ່ຽນແທນລະຫຼັບກັນໄດ້ກັບຄຳສັບທີ່ວ່າ "ສົນທິສັນຍາ" ໃນເອກະສານສະບັບນີ້.

- ຂໍ້ຕົກລົງຂອງປະທານ ຄຊກລ ສະບັບເລກທີ 01/ຄຊກລ, ລົງວັນທີ 30 ມີນາ 2005 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຊກລ.
- ຂໍ້ຕົກລົງຂອງປະທານ ຄຊກລ ສະບັບເລກທີ 04/ຄຊກລ, ລົງວັນທີ 8 ມັງກອນ 2009 ວ່າດ້ວຍ ການຮັບຮອງເອົາມາດຕະຖານການປະຕິບັດງານແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

<u>ພາກ II:</u> **ພາກສະເໜີ.**

1. ຖ້າສະເລ່ຍໃສ່ຫົວຄົນແລ້ວ, ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດໜັກໜ່ວງທີ່ສຸດໃນໂລກ. ໃນສົງຄາມອິນດູຈີນໄລຍະແຕ່ປີ 1964 ເຖິງປີ 1973 ສປປ ລາວ ໄດ້ກາຍເປັນສະໜໍລະພູມສູ້ຮົບທາງພາກພື້ນດິນ ແລະ ການຖິ້ມລະເບີດທາງອາກາດ ຢ່າງຮ້າຍແຮງ. ຕາມຂໍ້ມູນທີ່ບັນທຶກໄວ້, ໄດ້ມີການຖິ້ມລະເບີດຫຼາຍກວ່າສອງລ້ານໂຕນ; ໃນນັ້ນ, ມີລະເບີດລູກຫວ່ານ (ບົມບີ) ຫຼາຍກວ່າ 270 ລ້ານໜ່ວຍ ແລະ ຄາດວ່າມີປະມານ 30% ຂອງລະເບີດດັ່ງກ່າວ ແມ່ນຍັງບໍ່ທັນແຕກ.

2. ເຖິງວ່າສົງຄາມໄດ້ສິ້ນສຸດລົງເປັນເວລາ 35 ປີ ແລ້ວກໍຕາມ ແຕ່ລະເບີດບໍ່ທັນແຕກ (ລບຕ)[2] ຍັງສືບຕໍ່ເປັນໄພຂົ່ມຂູ່ຕໍ່ຊີວິດ ແລະ ເສດຖະກິດ-ສັງຄົມ ຂອງປະເທດຊາດຕະຫຼອດມາ. ລບຕ ໄດ້ເປັນສາເຫດເຮັດໃຫ້ປະຊາຊົນລົ້ມຕາຍ, ບາດເຈັບ ແລະ ເກີດການຂາດແຄນອາຫານ ເພາະມັນໄດ້ຈຳກັດການເຂົ້ານຳໃຊ້ທີ່ດິນຢ່າງປອດໄພ ເຂົ້າໃນການກະສິກຳ[3] ແລະ ພ້ອມກັນນັ້ນ, ຍັງເປັນສາເຫດເຮັດໃຫ້ຕ້ອງລົງທຶນສູງ ສຳລັບໂຄງການພັດທະນາໃນເຂດພື້ນທີ່ໆຕ້ອງໄດ້ເກັບກູ້ ລບຕ.

3. ປະຈຸບັນນີ້, ລບຕ ຍັງສືບຕໍ່ເປັນອຸປະສັກຂັດຂວາງ ຕໍ່ການບັນລຸເປົ້າໝາຍສະຫັດສະວັດ ເພື່ອການພັດທະນາ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020. ຜົນຂອງການຄົ້ນຄວ້າໄດ້ຊີ້ໃຫ້ເຫັນວ່າ ສະພາວະຄວາມທຸກຍາກ ແລະ ການຂາດແຄນສະບຽງອາຫານ ແມ່ນມີການພົວພັນຢ່າງສະໜິດແໜ້ນກັບບັນຫາ ລບຕ.

4. ຄວາມພະຍາຍາມ ໃນການແກ້ໄຂບັນຫາ ລບຕ ຂອງລັດຖະບານ ໄດ້ປະຕິບັດມາຕັ້ງແຕ່ຊຸມປີ 1990 ຊຶ່ງເບື້ອງຕົ້ນແມ່ນການຊ່ວຍເຫຼືອ ຜ່ານຜູ້ຊ່ຽວຊານອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ ແລະ ຕໍ່ມາການຊ່ວຍເຫຼືອດັ່ງກ່າວ ແມ່ນຜ່ານອົງການ ສປຊ. ປີ 1996 ໂດຍໄດ້ຮັບການສະໜັບສະໜູນຈາກອົງ

---

[2]ລບຕ ແມ່ນອາວຸດລະເບີດທີ່ມີແກັບທ້າງໄວ້ ຫຼື ກຽມເພື່ອຈະນຳໃຊ້ ແລະ ໄດ້ນຳໃຊ້ໃນການສູ້ຮົບທາງດ້ານການທະຫານ. ມັນອາດຖືກຍິງອອກ, ຖິ້ມລົງພາກພື້ນດິນ, ຖືກຍິງສົ່ງ ຫຼື ຖືກກະເດັນອອກ ແລະ ກຽມພ້ອມທີ່ຈະແຕກ ແຕ່ບາງກໍລະນີແມ່ນບໍ່ແຕກ. ຢູ່ໃນ ສປປ ລາວ ສຳລັບຂະແໜງກິດຈະການ ລບຕ ແລ້ວ ແມ່ນກ່ຽວພັນກັບທຸກໆຊະນິດລະເບີດ ຫຼື ອາວຸດທີ່ວ່າລະເບີດເສດເຫຼືອປາງສົງຄາມ (ອີອາຣດັບເບີ້ນຢູ) ທັງໝົດລວມທັງອາວຸດລະເບີດທີ່ປະລະໄວ້. ສະນັ້ນ, ການນຳໃຊ້ຄຳສັບ ລບຕ ນີ້ແມ່ນມີຄວາມສອດຄ່ອງກັບເງື່ອນໄຂຕົວຈິງຂອງ ສປປ ລາວ.

[3]ບົດການວິເຄາະ ກ່ຽວກັບ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ຄວາມສ່ຽງຂອງອົງການອາຫານໂລກ ເດືອນພຶດສະພາ 2008.

ການ ສປຊ ແລະ ອົງການຢູນິເຊັບ, ລັດຖະບານ ໄດ້ສ້າງຕັ້ງໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ຂຶ້ນ. ຫຼັງຈາກນັ້ນແປດປີ ລັດຖະບານໄດ້ກຳນົດແຜນຍຸດທະສາດແຫ່ງຊາດ ເພື່ອການແກ້ໄຂບັນຫາ ລບຕ ຊຶ່ງແຜນຍຸດທະສາດດັ່ງກ່າວນັ້ນເອີ້ນວ່າ: "ເສັ້ນທາງກ້າວສູ່ຄວາມປອດໄພ" ສຳລັບປີ 2003 ຫາ 2013 ແລະ ປີ 2006 ໄດ້ສ້າງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດແກ້ໄຂບັນຫາ ລບຕ (ຄຊກລ) ຂຶ້ນ ເພື່ອເຮັດໜ້າທີ່ໃນການຕິດຕາມ ແລະ ປະສານງານໃນວຽກງານຂະແໜງການ ລບຕ ຢູ່ ສປປ ລາວ.

5. ໃນປະຈຸບັນ ການປະຕິບັດວຽກງານແກ້ໄຂບັນຫາ ລບຕ ແມ່ນມີບັນດາອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ບໍລິສັດເອກະຊົນຈຳນວນໜຶ່ງ ເຄື່ອນໄຫວຢູ່ພາຍໃຕ້ການຊີ້ນຳຂອງ ຄຊກລ. ການຮ່ວມມືກັບສາກົນ ແມ່ນຜ່ານກອງປະຊຸມຂະແໜງການກັບປະເທດຜູ້ໃຫ້ທຶນ ແລະ ສາມກອງປະຊຸມວິຊາການເພື່ອເຕົ້າໂຮມພາກລັດຖະບານ ແລະ ອົງການຄູ່ຮ່ວມພັດທະນາເຂົ້າກັນ ໂດຍອີງໃສ່ຈິດໃຈຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ. ການຕິດຕາມຄວາມຄືບໜ້າ ຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ແມ່ນຫອ້ງການ ຄຊກລ ດຳເນີນການໂດຍກົງ ຊຶ່ງນັບແຕ່ປີ 1996 ເຖິງເດືອນທັນວາ ປີ 2009 ອົງການປະຕິບັດງານເກັບກູ້ ລບຕ ທັງພາຍໃນ ແລະ ຕ່າງປະເທດ ສາມາດເກັບກູ້ ລບຕ ອອກຈາກເນື້ອທີ່ດິນທີ່ເປັນບູລິມະສິດໄດ້ທັງໝົດ 23.070 ເຮັກຕາ ໃນນີ້ 15.931 ເຮັກຕາ ແມ່ນການເກັບກູ້ເພື່ອວຽກງານກະສິກຳ ແລະ 7.139 ເຮັກຕາ ແມ່ນເກັບກູ້ເພື່ອໂຄງການພັດທະນາຕ່າງໆ.

6. ແຜນຍຸດທະສາດສະບັບໃໝ່ນີ້ໄດ້ຮ່າງຂຶ້ນ ໂດຍຜ່ານການປຶກສາຫາລືກັບບັນດາຄູ່ຮ່ວມພັດທະນາ. ແຜນຍຸດທະສາດສະບັບໃໝ່ນີ້ແມ່ນຈະນຳໃຊ້ແທນເອກະສານ "ເສັ້ນທາງກ້າວສູ່ຄວາມປອດໄພ" ທີ່ໄດ້ສ້າງຂຶ້ນໃນປີ 2003. ການປັບປຸງແຜນຍຸດທະສາດດັ່ງກ່າວ ແມ່ນອີງໃສ່ບົດຮຽນການຈັດຕັ້ງປະຕິບັດແຜນດັ່ງກ່າວໃນໄລຍະເວລາ 5 ປີຜ່ານມາ ແລະ ອີງຕາມຜົນໄດ້ຮັບຈາກການປະເມີນຜົນທົ່ວຂະແໜງການໃນປີ 2008[4]. ຈຸດປະສົງໃນການປັບປຸງແຜນຍຸດທະສາດ ແມ່ນເພື່ອເຮັດໃຫ້ວຽກງານແກ້ໄຂບັນຫາ ລບຕ ເຊື່ອມໂຍງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານຫຼາຍຂຶ້ນ.

<u>ພາກ III:</u> ທົບທວນການຈັດຕັ້ງປະຕິບັດ ແຜນຍຸດທະສາດແຫ່ງຊາດແກ້ໄຂບັນຫາ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ" ຢູ່ ສປປ ລາວ ສຳລັບປີ 2003-2010 ລາຍງານຜົນຄວາມຄືບໜ້າປີ 2003-2011).

1. ໃນປີ 2009 ຄຊກລ ໄດ້ທົບທວນ ແລະ ປັບປຸງກອບຍຸດທະສາດຂອງຂະແໜງການ, "ເສັ້ນທາງກ້າວສູ່ຄວາມປອດໄພ". ລາຍງານຂ້າງລຸ່ມນີ້ ຊີ້ໃຫ້ເຫັນຜົນຄວາມຄືບໜ້າ ທີ່ໄດ້ຮັບໃນການປະຕິບັດວຽກງານຕ່າງໆ ທີ່ລະບຸໃນແຜນຍຸດທະສາດ "ເສັ້ນທາງກ້າວສູ່ຄວາມປອດໄພ" ແລະ ຈະເປັນອັນອ້າງອີງໃຫ້ແກ່ການປັບປຸງແຜນຍຸດທະສາດສະບັບໃໝ່ ເອີ້ນວ່າ "ເສັ້ນທາງກ້າວສູ່ຄວາມປອດໄພ II".

[4] ການປະເມີນຜົນທົ່ວຂະແໜງການ ລບຕ ຢູ່ ສປປ ລາວ, ເດືອນມິຖຸນາ ແລະ ກໍລະກົດ 2008 ໂດຍກຼີບພິນ, ເຄວລີ ແລະ ໄຊຍະສຸກ.

"ຍຸດທະສາດເສັ້ນທາງກ້າວສູ່ຄວາມປອດໄພ", ໂດຍສອດຄ່ອງກັບບູລິມະສິດຕ່າງໆ ທີ່ໄດ້ລະບຸໄວ້ໃນແຜນງານລຶບລ້າງຄວາມທຸກຍາກແຫ່ງຊາດ ແມ່ນໃຫ້ບັນລຸໄດ້ເປົ້າໝາຍທີ່ວ່າ ເຮັດໃຫ້ປະຊາຊົນຢູ່ໃນເຂດທີ່ໄດ້ຮັບຜົນກະທົບຈາກລະເບີດຝັງດິນ ແລະ ລບຕ ໄດ້ດຳລົງຊີວິດທີ່ປອດໄພ ແລະ ເຫັນວ່າ 46 ເມືອງບູລິມະສິດທີ່ທຸກຍາກທີ່ສຸດຂອງ 9 ແຂວງ ຄື: ແຂວງອັດຕະປື, ຈຳປາສັກ, ຫົວພັນ, ຄຳມ່ວນ, ຫຼວງພະບາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ຊຽງຂວາງ ແມ່ນໄດ້ຮັບຜົນກະທົບໜັກທີ່ສຸດ.

ເຫັນໄດ້ວ່າ "ຜົນກະທົບ" ຂອງ ລບຕ ໄດ້ຫຼຸດລົງດ້ວຍການປະຕິບັດງານແບບປະສົມປະສານ ລະຫວ່າງການກວດກູ້, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກອຸປະຕິເຫດ ລບຕ. ບັນດາກິດຈະກຳເຫຼົ່ານັ້ນ ແມ່ນໄດ້ປະຕິບັດມາກ່ອນປີ 2003 ແຕ່ແຜນຍຸດທະສາດ "ເສັ້ນທາງກ້າວສູ່ຄວາມປອດໄພ" ໄດ້ຈັດຕັ້ງບັນດາວຽກງານດັ່ງກ່າວໃຫ້ເປັນຮູບເປັນຮ່າງກ່ວາເກົ່າ. ພ້ອມດວ້ຍບັນດາຜົນງານທີ່ມີມາກ່ອນ ແລະ ໄລຍະຂອງແຜນຍຸດທະສາດ "ເສັ້ນທາງກ້າວສູ່ຄວາມປອດໄພ" ມີຜົນໄດ້ຮັບຫຼາຍ ແລະ ມີລັກສະນະເພີ່ມຂຶ້ນໃນແຕ່ລະປີ ຊຶ່ງມັນເປັນທ່າວງທ່າອັນດີ ໃນການບັນລຸວິໄສທັດຂອງແຜນຍຸດທະສາດ. ບັນດາຕົວເລກຜົນໄດ້ຮັບຂ້າງລຸ່ມນີ້ ແມ່ນໄດ້ສັງລວມການປະຕິບັດງານ ຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ແຕ່ 1996 ເຖິງ 31 ທັນວາ 2009.

| | |
|---|---|
| ຈຳນວນ ລບຕ ທີ່ຖືກທຳລາຍທັງໝົດ | 1.090.228 ໜ່ວຍ |
| ກວດກູ້ ລະເບີດລູກຫວ່ານ | 480.297 ໜ່ວຍ |
| ກວດກູ້ ເນື້ອທີ່ | 23.070 ເຮັກຕາ |
| - ກວດກູ້ ເນື້ອທີ່ພັດທະນາ | 7.139 ເຮັກຕາ |
| - ກວດກູ້ ເນື້ອທີ່ກະສິກຳ | 15.931 ເຮັກຕາ |
| ສຶກສາຄວາມສ່ຽງໄພຈາກ ລບຕ | 12.039 ບ້ານ |
| ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | (ສັງລວມໄດ້ສະເພາະປີ 2009 ເຖິງປະຈຸບັນ) 71 ຄົນ |

<u>ພາກທີ IV:</u> ວິໄສທັດ.

ວິໄສທັດຂອງແຜນຍຸດທະສາດສະບັບນີ້ ແມ່ນເຮັດໃຫ້ ສປປ ລາວ ປັດສະຈາກໄພຂົ່ມຂູ່ຈາກ ລບຕ, ເຮັດໃຫ້ບຸກຄົນ ແລະ ຊຸມຊົນດຳລົງຊີວິດຢູ່ໃນສະພາບແວດລ້ອມທີ່ປອດໄພ ຕັ້ງໜ້າປະກອບສ່ວນເຂົ້າໃນການພັດທະນາ, ຮັບປະກັນໃຫ້ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກ ລບຕ[5] ໄດ້ຮັບການຕອບສະໜອງ ແລະ ສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ເປັນຢ່າງດີ.

[5] ຄຳສັບ **ຜູ້ຖືກເຄາະຮ້າຍ**: ໂດຍອີງຕາມຄຳນິຍາມຢູ່ໃນສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (ບົມບີ) ແມ່ນ: ທຸກໆຄົນຜູ້ທີ່ຖືກຂ້າຕາຍ ຫຼື ໄດ້ຮັບຄວາມທຸກທໍລະມານທາງກາຍ ຫຼື ຈິດໃຈ ຍ້ອນການບາດເຈັບ, ສູນເສຍທາງເສດຖະກິດ, ຢູ່ນອກສັງຄົມ ຫຼື ບໍ່ສາມາດໃຊ້ສິດທິຂອງຕົນ ຍ້ອນສາເຫດມາຈາກອຸປະຕິເຫດລະເບີດ ຊຶ່ງລວມທັງຜູ້ທີ່ຖືກເຄາະຮ້າຍໂດຍກົງ, ຄອບຄົວຂອງເຂົາເຈົ້າ ແລະ ຊຸມຊົນ.

พากที V: เป้าໝາຍຍຸດທະສາດ.

1. ເປົ້າໝາຍຍຸດທະສາດຂອງການແກ້ໄຂບັນຫາ ລບຕ ໃນໄລຍະປີ 2011-2020 ແມ່ນຫຼຸດຜ່ອນໄພຂົ່ມຂູ່ຈາກ ລບຕ ຕໍ່ຊີວິດຂອງປະຊາຊົນ ແລະ ເສດຖະກິດ-ສັງຄົມ ຊຶ່ງ ລບຕ ທີ່ຕົກຄ້າງ ແລະ ສິ່ງທ້າທາຍຕ່າງໆ ຈະຖືກແກ້ໄຂຢ່າງເໝາະສົມດ້ວຍຄວາມອາດສາມາດທີ່ຍືນຍົງ ແລະ ເປັນໜ້າທີ່ປົກກະຕິຂອງບັນດາສະຖາບັນການຈັດຕັ້ງຂອງລັດຖະບານ.

ພາກ VI: ສິ່ງທ້າທາຍ ແລະ ກາລະໂອກາດ.

1. ເຖິງແມ່ນວ່າ ນັບຕັ້ງແຕ່ໄດ້ສ້າງຕັ້ງໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ໃນປີ 1996 ເປັນຕົ້ນມາ ສາມາດບັນລຸຜົນສຳເລັດຢ່າງປະຈັກຕາກໍຕາມ ແຕ່ແຜນຍຸດທະສາດແກ້ໄຂບັນຫາ ລບຕ ຍັງມີສິ່ງທ້າທາຍຕົ້ນຕໍທີ່ເປັນອຸປະສັກຕໍ່ການບັນລຸຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້, ສິ່ງທ້າທາຍອັນຕົ້ນຕໍແມ່ນການເຊື່ອມໂຍງເຂົ້າກັບວຽກງານການພັດທະນາ ແລະ ການປະຕິບັດພັນທະສົນທິສັນຍາ ຕ້ານລະເບີດລູກຫວ່ານ, ຖ້າແຜນຍຸດທະສາດ ຫາກສອດຄ່ອງກັບຈິດໃຈດັ່ງກ່າວແລ້ວ ມັນຈະເປັນກາລະໂອກາດໃໝ່ໃນການລະດົມກຳລັງແຮງ ພາຍໃນ ແລະ ສາກົນ ເລັ່ງລັດການປະຕິບັດວຽກງານດັ່ງກ່າວ ໃນຕໍ່ໜ້າ.

2. ສິ່ງທ້າທາຍອັນໃຫຍ່ຫຼວງອັນໜຶ່ງ ແມ່ນຜູ້ຖືກເຄາະຮ້າຍຈາກ ລບຕ ຊຶ່ງຜົນການສຳຫຼວດໃນປີ 2008 ຜ່ານມາໄດ້ພົບວ່າມີຜູ້ຖືກເຄາະຮ້າຍຈາກ ລບຕ ຫຼາຍກວ່າ 20,000 ຄົນ ແລະ ຕະຫຼອດທົດສະວັດທີ່ຜ່ານມາຜູ້ຖືກເຄາະຮ້າຍຈາກ ລບຕ ສະເລ່ຍແລ້ວມີເຖິງ 300 ຄົນຕໍ່ປີ ຊຶ່ງສູງກວ່າທີ່ໄດ້ຄາດຄະເນໄວ້ສາມເທື່ອ. ຕາມຂໍ້ມູນທີ່ມີສາມາດເວົ້າໄດ້ວ່າ ສປປ ລາວ ມີຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຜູ້ທີ່ໄດ້ຮັບຜົນກະທົບຈາກລະເບີດດັ່ງກ່າວຢູ່ໃນໂລກ.

3. ຄວາມຕ້ອງການມີຂໍ້ມູນຂ່າວສານທີ່ຖືກຕ້ອງ ແລະ ຊັດເຈນ ກ່ຽວກັບຜົນກະທົບຈາກ ລບຕ ຕໍ່ຊຸມຊົນແມ່ນນັບມື້ຫລາຍຂື້ນ ຊຶ່ງປະຈຸບັນ ຫ້ອງການ ຄຊກລ ດຳເນີນການເກັບກຳ, ຄຸ້ມຄອງ ແລະ ເຜີຍແຜ່ຂໍ້ມູນຂ່າວສານດັ່ງກ່າວ ແຕ່ຍັງຈະຕ້ອງໄດ້ພັດທະນາຕື່ມອີກ ເພື່ອຮັບປະກັນດ້ານຄຸນນະພາບ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຢ່າງທັນການ, ອັນນີ້ ຖືເປັນບູລິມະສິດອັນດັບໜຶ່ງຂອງແຜນຍຸດທະສາດສະບັບນີ້.

4. ລະບົບການປະຕິບັດງານພາຍໃນຂະແໜງການ ລບຕ ໃນປະຈຸບັນ ຍັງບໍ່ທັນສົ່ງເສີມຢ່າງພຽງພໍໃນການມີສ່ວນຮ່ວມແບບສະເໝີພາບ ລະຫວ່າງຍິງ-ຊາຍ, ຖ້າເບິ່ງໂດຍພາບລວມແລ້ວເຫັນວ່າ ແມ່ຍິງຍັງບໍ່ທັນໄດ້ອອກສຽງ ໃນຂະບວນການປະຕິບັດງານເທົ່າທີ່ຄວນ. ການວັດແທກຜົນຄວາມຄືບໜ້າ ແມ່ນມີແຕ່ດ້ານປະລິມານ ສ່ວນການນຳໃຊ້ທີ່ດິນ ແລະ ຜົນປະໂຫຍດທີ່ໄດ້ຈາກທີ່ດິນພາຍຫຼັງການເກັບກູ້ ຍັງບໍ່ໄດ້ມີການປະເມີນຢ່າງເປັນລະບົບທີ່ແນ່ນອນເທື່ອ. ພາຍໃຕ້ການນຳພາຂອງ ຄຊກລ ບັນດາອົງການປະຕິບັດງານ ຄວນຕັ້ງໜ້າສົ່ງເສີມຂະບວນການມີສ່ວນຮ່ວມໃນຂະແໜງການແກ້ໄຂບັນຫາ ລບຕ ເພື່ອເຮັດໃຫ້ຂະແໜງການສາມາດທັນ

ປຸ່ງນສູ່ຂະບວນການ ຖືເອົາຄົນ ແລະ ຊຸມຊົນເປັນໃຈກາງໃນການວາງແຜນ ແລະ ປະເມີນຜົນການກະທົບທາງດ້ານເສດຖະກິດ-ສັງຄົມ ຕາມທິດກ້າວໄປສູ່ການຫລຸດຜ່ອນຄວາມທຸກຍາກ ຂອງລັດຖະບານ.

5. ຂະແໜງການແກ້ໄຂບັນຫາ ລບຕ ມີລະບົບການຈັດຕັ້ງທີ່ດີ, ມີກົນໄກທີ່ມີປະສິດທິຜົນ ແລະ ມີບັນດາອົງການຕ່າງໆ ໃນການປະຕິບັດງານທີ່ມີປະສິບການ. ລັດຖະບານ ສາມາດເອົາເປັນບ່ອນອີງ ໃນການປະສານງານຂໍການຊ່ວຍເຫຼືອຈາກສາກົນ. ເຖິງຢ່າງໃດກໍຕາມ, ເພື່ອບັນລຸໄດ້ການປະຕິບັດພັນທະ ທີ່ລະບຸຢູ່ໃນສົນທິສັນຍາສາກົນ ຕ້ານລະເບີດລູກຫວ່ານນັ້ນ ຍັງຮຽກຮ້ອງໃຫ້ມີການຈັດສັນຊັບພະຍາກອນ ແລະ ຄວາມສາມາດດ້ານຕ່າງໆ ປະຕິບັດແຜນຍຸດທະສາດສະບັບນີ້ ຕາມຈິດໃຈຫຼັກການຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ. ສິ່ງທ້າທາຍ ໃນໄລຍະຍາວ ແມ່ນຄວາມຍືນຍົງດ້ານຄວາມອາດສາມາດພາຍໃນ ເພື່ອຫຼຸດຜ່ອນການເອື່ອຍອີງຕໍ່ການຊ່ວຍເຫຼືອສາກົນລົງ ເທື່ອລະກ້າວ. ສິ່ງທ້າທາຍອີກອັນໜຶ່ງ ແມ່ນການຫັນເອົາວຽກງານການແກ້ໄຂບັນຫາ ລບຕ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ບັນດາແຜນງານອື່ນໆ ເພື່ອຮັບປະກັນໃຫ້ບັນລຸສະພາວະຄວາມຍືນຍົງເທົ່າທີ່ຈະເປັນໄປໄດ້.

<u>ພາກ VII:</u> **ຄາດໝາຍຍຸດທະສາດ ແລະ ບັນດາກິດຈະກໍາ.**

1. ຫຼຸດຜ່ອນຈໍານວນຜູ້ຖືກເຄາະຮ້າຍຈາກ ລບຕ ຈາກ 300 ຄົນ ລົງຕໍ່າກ່ວາ 75 ຄົນຕໍ່ປີ (1)
   <u>ກິດຈະກໍາຕົ້ນຕໍ.</u>
   ກ. ດໍາເນີນການສຶກສາຄວາມສ່ຽງຕໍ່ກຸ່ມສ່ຽງ ເພື່ອປ່ຽນແປງພຶດຕິກໍາ ແລະ ປູກຈິດສໍານຶກ ເພື່ອຕອບຮັບແກ້ໄຂອຸປະຕິເຫດຈາກ ລບຕ ແລະ ໃຫ້ການສຶກສາແກ່ເດັກນ້ອຍຢູ່ໂຮງຮຽນ ໃນເຂດພື້ນທີ່ມີ ລບຕ ຕົກຄ້າງ.
   ຂ. ໃຫ້ການສະໜັບສະໜູນຢ່າງເໝາະສົມ ແກ່ອາສາສະໝັກຂັ້ນບ້ານ ເພື່ອເຮັດໜ້າທີ່ສຶກສາຄວາມສ່ຽງຕໍ່ກຸ່ມສ່ຽງ.
   ຄ. ຊຸກຍູ້ໃຫ້ມີການປະສານງານຫຼາຍຂຶ້ນ ເພື່ອຕອບຮັບຢ່າງທັນການ ໃນການປ້ອງກັນອຸປະຕິເຫດຈາກ ລບຕ ໂດຍຜ່ານການຮ່ວມມືການສຶກສາຄວາມສ່ຽງ, ການເກັບກູ້ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ.
   ງ. ສ້າງນິຕິກໍາ ແລະ ບັງຄັບໃຊ້ນິຕິກໍາ ເພື່ອຄຸ້ມຄອງການຄ້າຂາຍເຫຼັກເສດ ແລະ ກິດຈະກໍາອື່ນໆທີ່ມີຄວາມສ່ຽງຈາກ ລບຕ.

2. ຮັບປະກັນການປິ່ນປົວທາງການແພດ ແລະ ການຟື້ນຟູສຸຂະພາບຂອງຜູ້ລອດຊີວິດ[6] ຈາກອຸປະຕິເຫດ ລບຕ ຢ່າງສອດຄ່ອງກັບສົນທິສັນຍາສາກົນ[7](2)

[6]ຜູ້ລອດຊີວິດ: ແມ່ນຜູ້ຖືກບາດເຈັບທີ່ລອດຊີວິດຈາກອຸປະຕິເຫດ.

[7]ແຕ່ລະລັດພາຄີ ແມ່ນໃຫ້ຄວາມເອົາໃຈໃສ່ ຕໍ່ ຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ (ບົມບີ) ໃນພື້ນທີ່ພາຍໃຕ້ເຂດອໍານາດ ຫຼື ການຄວບຄຸມຂອງຕົນທີ່ອີງຕາມກົດໝາຍວ່າດ້ວຍສິດທິມະນຸດ ແລະ ມະນຸດສະທໍາສາກົນ, ສະໜອງການຊ່ວຍເຫຼືອຢ່າງພຽງພໍ ສໍາລັບ ອາຍຸ-ເພດ, ລວມທັງ ການດູແລທາງການແພດ, ສະໜັບສະໜູນທາງດ້ານການຟື້ນຟູຈິດໃຈ ຈົນເຖິງ ສະໜອງທາງດ້ານເສດຖະກິດ-ສັງຄົມໃຫ້ແກ່ພວກເຂົາ. ແຕ່ລະລັດພາຄີຈະສຸມໃສ່ທຸກຄວາມພະຍາຍາມໃນການເກັບກໍາຂໍ້ມູນທີ່ກ່ຽວຂ້ອງ, ໜ້າເຊື່ອຖືໄດ້ ກ່ຽວກັບ ຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ (ບົມບີ).

<u>ກິດຈະກຳຕົ້ນຕໍ.</u>

ກ. ສ້າງ ແລະ ບຳລຸງຮັກສາລະບົບຖານຂໍ້ມູນຂ່າວສານຜູ້ຖືກເຄາະຮ້າຍຈາກ ລບຕ.

ຂ. ນຳໃຊ້ຂໍ້ມູນຂ່າວສານຜູ້ຖືກເຄາະຮ້າຍຈາກ ລບຕ, ເກັບກຳ, ສ້າງແຜນທີ່, ວິເຄາະ ແລະ ເຜີຍແຜ່ຂໍ້ມູນຂ່າວສານລະອຽດ ກ່ຽວກັບຜູ້ຖືກເຄາະຮ້າຍຈາກ ລບຕ.

ຄ. ຕອບສະໜອງການປິ່ນປົວສຸກເສີນຢູ່ຂັ້ນບ້ານ ແລະ ພັດທະນາປະສິດທິພາບ ຂອງລະບົບການປິ່ນປົວສຸກເສີນ ແລະ ລະບົບການຂົນສົ່ງຜູ້ຖືກເຄາະຮ້າຍຈາກ ລບຕ ໄປສູ່ສະຖານທີ່ປິ່ນປົວການແພດ.

ງ. ສົ່ງເສີມການບໍລິການຟື້ນຟູກາຍະບຳບັດ.

ຈ. ພັດທະນາການບໍລິການຟື້ນຟູທາງຈິດໃຈ ຢູ່ຊຸມຊົນທີ່ມີ ບລຕ ຕົກຄ້າງ.

ສ. ກຳນົດ ແລະ ແກ້ໄຂບັນດາຊ່ອງຫວ່າງຂອງທັກເສົາຄ້ຳ ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກອຸປະຕິເຫດ ລບຕ[8].

3. ປົດປ່ອຍເນື້ອທີ່ດິນ ທີ່ເປັນບູລິມະສິດ ແລະ ເກັບກູ້ ລບຕ ຕາມມາດຕະຖານແຫ່ງຊາດ ແລະ ພັນທະສົນທິສັນຍາສາກົນ[9] (3)

<u>ກິດຈະກຳຕົ້ນຕໍ.</u>

ກ. ກຳນົດເນື້ອທີ່ບູລິມະສິດຢ່າງມີຕົວຊີ້ວັດທີ່ຈະແຈ້ງ ແລະ ປະຕິບັດ ບົນພື້ນຖານແຜນພັດທະນາບ້ານເມືອງ, ແຂວງ ແລະ ແຜນພັດທະນາລະດັບຊາດ.

ຂ. ປົດປ່ອຍເນື້ອທີ່ດິນ ໂດຍນຳໃຊ້ຫຼັກການບໍລິຫານຄວາມສ່ຽງ ຊຶ່ງກ່ອນອື່ນຕ້ອງວິເຄາະຂໍ້ມູນ, ສຳຫຼວດທົ່ວໄປ ແລະ ສຳຫຼວດທາງເຕັກນິກ, ທຳລາຍເຄື່ອນທີ່ ແລະ/ຫຼື ສຸດທ້າຍຈຶ່ງດຳເນີນການເກັບກູ້.

ຄ. ຕິດຕາມກວດກາການເກັບກູ້ ແລະ ການປົດປ່ອຍເນື້ອທີ່ດິນໃນແງ່ຂອງຜົນກະທົບ ແລະ ມູນຄ່າທີ່ໃຊ້ໃນວຽກງານດັ່ງກ່າວ.

ງ. ການປະຕິບັດງານການເກັບກູ້ ຂອງບັນດາອົງການປະຕິບັດງານທັງໝົດ ຕ້ອງຮັບປະກັນໃຫ້ສອດຄ່ອງກັບມາດຕະຖານແຫ່ງຊາດ.

4. ຮັບປະກັນປະສິດທິພາບການນຳພາ, ການປະສານງານ ແລະ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ (4)

<u>ກິດຈະກຳຕົ້ນຕໍ.</u>

ກ. ບຳລຸງຮັກສາຖານຂໍ້ມູນແຫ່ງຊາດ ທີ່ກ່ຽວຂ້ອງກັບ ລບຕ ແລະ ສະໜອງຂໍ້ມູນດັ່ງກ່າວ ໃຫ້ແກ່ບັນດາຄູ່ຮ່ວມງານ.

---

[8] ເສົາຄ້ຳຫົກປະການ: 1. ການເກັບກຳຂໍ້ມູນ; 2. ການປິ່ນປົວທາງການແພດ; 3. ການຟື້ນຟູໜ້າທີ່ການ; 4. ການຟື້ນຟູທາງດ້ານຈິດຕະສັງຄົມ; 5. ການເຊື່ອມສານທາງເສດຖະກິດ ແລະ ຝຶກອົບຮົມວິຊາຊີບ; 6. ການໃຫ້ຄຳປຶກສາແນະນຳ ກ່ຽວກັບສິດທິຂອງຜູ້ຖືກເຄາະຮ້າຍ.

[9] ພາຍໃຕ້ມາດຕາ 4 ຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (ບົມບີ), ແຕ່ລະລັດພາຄີ ຕ້ອງປະຕິບັດການກວດກູ້ ແລະ ທຳລາຍ ຫຼື ຮັບປະກັນການກວດກູ້ ແລະ ການທຳລາຍລະເບີດລູກຫວ່ານ ທີ່ຍັງເຫຼືອຢູ່ໃນເຂດພື້ນທີ່ຕົກຄ້າງ ຊ້າສຸດບໍ່ໃຫ້ກາຍ 10 ປີ: ພາຍຫຼັງທີ່ສົນທິສັນຍາມີຜົນບັງຄັບໃຊ້.

ຂ. ຄົ້ນຄ້ວາ, ຄາດຄະເນຄວາມຕ້ອງການທຶນ ສຳລັບການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ສະບັບນີ້.

ຄ. ສ້າງແຜນປະຈຳປີຂອງຂະແໜງການ ລບຕ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນຍຸດທະສາດສະບັບນີ້, ໂດຍສະເພາະແມ່ນ ການຈັດຕັ້ງປະຕິບັດບັນດາຂໍ້ສະເໜີແນະ ຈາກການປະເມີນໃນປີ 2008 ໃນແງ່ບົດບາດຍິງ-ຊາຍ. ແຜນການປະຈຳປີ ຕ້ອງລວມມີບັນດາເປົ້າໝາຍສະເພາະຂອງຂະແໜງການ ແລະ ອີງຕາມຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ.

ງ. ສ້າງຄູ່ຮ່ວມງານ ເພື່ອປະກອບທຶນແບບບໍ່ມີເງື່ອນໄຂ ສຳລັບການພັດທະນາຂະແໜງການ ລບຕ.

ຈ. ສ້າງຄູ່ຮ່ວມງານ ເພື່ອສະໜອງທຶນສົມທົບແບບຫຼາຍປີ ເພື່ອການພັດທະນາຂະແໜງການ ລບຕ.

ສ. ພັດທະນາແຜນປະຕິບັດງານປະຈຳປີ ພ້ອມທັງ ເພີ່ມການຮ່ວມງານ ໂດຍຜ່ານການປຶກສາຫາລືພາຍໃນກຸ່ມຂະແໜງການ ລບຕ[10].

5. ສ້າງຂີດຄວາມອາດສາມາດແຫ່ງຊາດ ທີ່ຍືນຍົງ ໂດຍຈັດຕັ້ງໃຫ້ເປັນໜ້າທີ່ປົກກະຕິ ຂອງສະຖາບັນການຈັດຕັ້ງຂອງລັດຖະບານ (5)

<u>ກິດຈະກຳຕົ້ນຕໍ.</u>

ກ. ຮັບປະກັນໃຫ້ແຜນຍຸດທະສາດ, ແຜນງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມທຸກຂັ້ນ ຕ້ອງບັນຈຸງົບປະມານປະຕິບັດວຽກງານແກ້ໄຂ ລບຕ.

ຂ. ກະກຽມ ແລະ ເລີ່ມຈັດຕັ້ງປະຕິບັດແຜນການຫັນເອົາວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະວຽກງານການສຶກສາຄວາມສ່ຽງຈາກ ລບຕ ໃຫ້ເປັນວຽກລະດັບຊາດ ແລະ ເປັນວຽກຂອງການຈັດຕັ້ງຂອງລັດຖະບານ.

ຄ. ກຳນົດບັນດາສະຖາບັນການຈັດຕັ້ງ ແລະ ສ້າງຄວາມອາດສາມາດ ຂອງສະຖາບັນການຈັດຕັ້ງ ເພື່ອຮັບມືໃນການແກ້ໄຂໄພຂົ່ມຂູ່ຈາກ ລບຕ ທີ່ຕົກຄ້າງໃນໄລຍະຍາວ.

ງ. ສ້າງສູນຝຶກອົບຮົມແຫ່ງຊາດ ຊຶ່ງໄລຍະຍາວ ລັດຖະບານ ຕ້ອງເປັນເຈົ້າຂອງ, ມີງົບປະມານສະໜັບສະໜູນ, ມີຫຼັກສູດແຫ່ງຊາດ ເພື່ອຮັບຮອງພະນັກງານ ຕາມມາດຕະຖານແຫ່ງຊາດ. ສູນດັ່ງກ່າວຈະນຳໃຊ້ຝຶກ, ຮັບຮອງ ແລະ ສົ່ງເສີມໃຫ້ພະນັກງານ ຂອງທຸກໆອົງການປະຕິບັດງານເຂົ້າມາຝຶກອົບຮົມ ໂດຍຈະເສຍຄ່າໃນລາຄາຕົ້ນທຶນ.

ຈ. ສ້າງຫໍພິພິດຕະພັນລະເບີດບໍ່ທັນແຕກທີ່ຕົກຄ້າງແຫ່ງຊາດ ເພື່ອສຶກສາເຍົາວະຊົນຄົນລຸ້ນຫຼັງ ກ່ຽວກັບ ຜົນຮ້າຍຂອງສົງຄາມ.

ສ. ສ້າງແຜນໄລຍະຍາວ ແລະ ຈັດຕັ້ງປະຕິບັດການຊ່ວຍເຫຼືອ ດ້ານວິຊາການໃນຂະແໜງການ ລບຕ.

---

[10] ລວບລວມພາລະກິດຂອງບັນດາຜູ້ໃຫ້ທຶນ, ອົງການສະຫະປະຊາຊາດ, ທະນາຄານໂລກ, ອົງການທີ່ບໍ່ຂຶ້ນກັບລັດຖະບານ ໃນບ່ອນທີ່ສາມາດເປັນໄປໄດ້ ໃນການເຮັດວຽກປະສານງານຮ່ວມກັນ ພ້ອມດ້ວຍສ້າງແຫຼ່ງຊັບພະຍາກອນທີ່ປອດໄພ.

6. ຮັບປະກັນການປະຕິບັດພັນທະ ໃນສົນທິສັນຍາສາກົນ (6)

<u>ກິດຈະກຳຕົ້ນຕໍ.</u>

ກ. ສ້າງນິຕິກຳ ແລະ ບັງຄັບໃຊ້ນິຕິກຳ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ພັນທະສົນທິສັນຍາ.

ຂ. ສະໜອງບົດລາຍງານປະຈຳປີ ໃຫ້ເລຂາທິການໃຫຍ່ອົງການສະຫະປະຊາຊາດ ດັ່ງທີ່ລະບຸໄວ້ໃນມາດຕາ 7 ຂອງສົນທິສັນຍາຕ້ານລະເບີດລູກຫວ່ານ.

ຄ. ສ້າງຕັ້ງກອງທຶນພິເສດລະຫວ່າງຊາດ ເພື່ອສະໜັບສະໜູນຈັດຕັ້ງປະຕິບັດສົນທິສັນຍາ ຕ້ານລະເບີດລູກຫວ່ານຢ່າງເຕັມສ່ວນ ໂດຍສອດຄ່ອງກັບຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ.

7. ບັນດາຕົວຊີ້ວັດ ຜົນສຳເລັດຂອງຄາດໝາຍ.

7.1 ຕົວຊີ້ວັດຜົນສຳເລັດຂອງຄາດໝາຍ (1)

ກ. ຈຳນວນກິດຈະກຳການສຶກສາຄວາມສ່ຽງ ໃນເຂດທີ່ມີ ລບຕ ຕົກຄ້າງ ໂດຍສະເພາະບ່ອນທີ່ມີກຸ່ມສ່ຽງເພີ່ມຂຶ້ນ (ເຫັນໄດ້ຈາກການປະເມີນວຽກງານສຶກສາຄວາມສ່ຽງ ແລະ/ຫຼື ໃນການຕອບຮັບອຸປະຕິເຫດຈາກ ລບຕ).

ຂ. ຄວາມຮັບຮູ້, ການປ່ຽນແປງທັດສະນະ ແລະ ພຶດຕິກຳທີ່ປອດໄພ ຂອງກຸ່ມສ່ຽງເພີ່ມຂຶ້ນ ໂດຍວັດແທກໄດ້ ຈາກການສຳຫຼວດກ່ຽວກັບຄວາມຮັບຮູ້, ທັດສະນະ ແລະ ພຶດຕິກຳ.

ຄ. ການປະຕິບັດໜ້າທີ່ຂອງອາສາສະໝັກບ້ານ ແລະ ການສະໜັບສະໜູນຕ່າງໆໄດ້ຮັບການຕິດຕາມ ແລະ ປະເມີນຜົນຕາມຕົວຊີ້ວັດທີ່ກຳນົດໄວ້.

ງ. ທຸກໆການລາຍງານກ່ຽວກັບ ລບຕ ໄດ້ຕອບຮັບແກ້ໄຂພາຍໃນ 7 ວັນ[11].

ຈ. ບົດລາຍງານກ່ຽວກັບອຸປະຕິເຫດຈາກ ລບຕ ໄດ້ສ້າງຂຶ້ນ ແລະ ເຜີຍແຜ່ໃຫ້ບັນດາຄູ່ຮ່ວມງານຢ່າງເປັນປົກກະຕິ.

ສ. ນິຕິກຳເພື່ອຄຸ້ມຄອງການຄ້າຂາຍເສດເຫຼັກ ແລະ ກິດຈະການອື່ນໆ ທີ່ມີຄວາມສ່ຽງ ໄດ້ຮັບການສ້າງຂຶ້ນ ແລະ ບັງຄັບໃຊ້ຢ່າງມີປະສິດທິຜົນ.

7.2 ຕົວຊີ້ວັດຜົນສຳເລັດຂອງຄາດໝາຍ (2)

ກ. ລາຍລະອຽດກ່ຽວກັບອຸປະຕິເຫດຈາກ ລບຕ ໄດ້ຮັບການເກັບກຳ ແລະ ລະບົບຂໍ້ມູນກ່ຽວກັບຜູ້ຖືກເຄາະຮ້າຍ ຄົບຖ້ວນ, ທັນການ ແລະ ສາມາດໃຫ້ບໍລິການໄດ້.

ຂ. ບັນດາຜູ້ຖືກເຄາະຮ້າຍໄດ້ຮັບການດູແລດ້ວຍການປິ່ນປົວທາງແພດ ແລະ ການຟື້ນຟູສຸຂະພາບ ແລະ ລະບົບຂໍ້ມູນ ຜູ້ຖືກເຄາະຮ້າຍໄດ້ຮັບການປັບປຸງໃຫ້ທັນການ ໂດຍມີຂໍ້ມູນຊັດເຈນ ແລະ ແຍກປະເພດ.

---

[11] "ການຕອບຮັບ" ອາດໝາຍເຖິງ ການເຄື່ອນຍ້າຍຢ່າງປອດໄພ, ການທຳລາຍ, ການໝາຍ, ການໂຄສະນາສຶກສາຄວາມສ່ຽງ ຫຼື ການສ້າງແຜນເພື່ອແກ້ໄຂການລາຍງານດັ່ງກ່າວ ຕາມພາຍຫຼັງ ເມື່ອມີເງື່ອນໄຂທີ່ອຳນວຍຄວາມສະດວກ, ຄວນຈະປະກອບມີການຕິດຕໍ່ພົວພັນກັບບຸກຄົນ/ອົງການຈັດຕັ້ງ ເພື່ອເລີ່ມລາຍງານພາຍໃນ 7 ວັນ.

ຄ. ຄວາມຕ້ອງການຂອງຜູ້ລອດຊີວິດໄດ້ຮັບການລາຍງານຢ່າງປົກກະຕິ ແລະ ເຜີຍແຜ່ໃຫ້ແກ່ບັນດາຄູ່ຮ່ວມພັດທະນາ.

ງ. ການໃຫ້ບໍລິການຜູ້ຖືກເຄາະຮ້າຍຈາກ ລບຕ ມີການລາຍງານຢ່າງປົກກະຕິ.

7.3 ຕົວຊີ້ວັດຜົນສຳເລັດ ຂອງຄາດໝາຍ (3)

ກ. ເນື້ອທີ່ບູລິມະສິດໃນການເກັບກູ້ ລບຕ ຂອງບ້ານ, ເມືອງ, ແຂວງ ແລະ ລະດັບຊາດໄດ້ຖືກກຳນົດເປັນແຕ່ລະປີ ແລະ ສັງລວມຢູ່ຫ້ອງການ ຄຊກລ.

ຂ. ເນື້ອທີ່ທີ່ຈະປົດປ່ອຍຢູ່ບັນດາບ້ານທີ່ຖືກກະທົບຈາກ ລບຕ ໄດ້ຮັບການການສຳຫຼວດ ແລະ ຈັດເປັນບູລິມະສິດ ກ່ອນທີ່ອົງການປະຕິບັດງານຈະລົງມືປະຕິບັດການເກັບກູ້.

ຄ. ທຸກໆອົງການປະຕິບັດງານມີແຜນວຽກ ແລະ ມີການຈັດບຸລິມະສິດ ທີ່ໄດ້ຜ່ານການເຫັນດີຂອງ ຄຊກລ.

ງ. ບັນດາເນື້ອທີ່ບູລິມະສິດ ທີ່ໄດ້ຮັບການປົດປ່ອຍເພີ່ມຂຶ້ນໃນແຕ່ລະປີ.

ຈ. ການຕອບສະໜອງການທຳລາຍເຄື່ອນທີ່ ເພີ່ມຂຶ້ນແຕ່ລະປີ.

ສ. ຕົວຊີ້ວັດດ້ານເສດຖະກິດ-ສັງຄົມ ລວມທັງບົດບາດຍິງ-ຊາຍ ແລະ ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ມູນຄ່າຂອງການປະຕິບັດການເກັບກູ້ໄດ້ຖືກກຳນົດອອກ ເພື່ອເປັນບ່ອນອີງໃຫ້ແກ່ ຄຊກລ ແລະ ອົງການປະຕິບັດງານອື່ນໆ ນຳໃຊ້ເຂົ້າໃນການຕິດຕາມກວດກາ.

ຊ. ການປະຕິບັດງານຂອງທຸກໆອົງການປະຕິບັດງານ ສອດຄ່ອງກັບມາດຕະຖານແຫ່ງຊາດ ແລະ ກວດກາຕິດຕາມໂດຍ ຄຊກລ.

7.4 ຕົວຊີ້ວັດຜົນສຳເລັດ ຂອງຄາດໝາຍ (4)

ກ. ຖານຂໍ້ມູນແຫ່ງຊາດ ລວມທັງບັນດາບົດລາຍງານກ່ຽວກັບ ລບຕ ສອດຄ່ອງກັບມາດຕະຖານແຫ່ງຊາດ.

ຂ. ບັນດາຄູ່ຮ່ວມງານ ໄດ້ຮັບຂໍ້ມູນຈາກຖານຂໍ້ມູນແຫ່ງຊາດຕາມການຮ້ອງຂໍຢ່າງທັນການ.

ຄ. ມູນຄ່າແບບກະຕວງສຳລັບການຈັດຕັ້ງປະຕິບັດແຜນຍຸດທະສາດໄດ້ຖືກກຳນົດອອກ.

ງ. ແຜນການປະຈຳປີຂອງຂະແໜງການ ໄດ້ກຳນົດບູລິມະສິດຢ່າງຈະແຈ້ງ ແລະ ມີເປົ້າໝາຍສອດຄ່ອງກັບຍຸດທະສາດສະບັບນີ້, ລວມທັງບົດບາດຍິງ-ຊາຍ ແລະ ເປົ້າໝາຍການຊ່ວຍເຫຼືອ ທີ່ມີປະສິດທິຜົນ.

ຈ. ບັນດາຂໍ້ສະເໜີແນະ ຈາກການປະເມີນກ່ຽວກັບ ບົດບາດຍິງ-ຊາຍ ໃນຂະແໜງການ ລບຕ ປີ 2008 ໄດ້ຮັບການຈັດຕັ້ງປະຕິບັດ.

ສ. ອັດຕາສ່ວນຂອງການລົງທຶນທຶນ ແບບບໍ່ມີເງື່ອນໄຂໄດ້ເພີ່ມຂຶ້ນ.

ຊ. ອັດຕາສ່ວນຂອງການລົງທຶນທຶນ ແບບໄລຍະຍາວໄດ້ເພີ່ມຂຶ້ນ.

ຍ. ແຜນປະຕິບັດງານປະຈຳປີ ທີ່ມີອັດຕາສ່ວນການຮ່ວມພາລະກິດເພີ່ມຂຶ້ນ.

7.5 ຕົວຊີ້ວັດຜົນສໍາເລັດ ຂອງຄາດໝາຍ (5)

ກ. ຄວາມຕ້ອງການແກ້ໄຂ ລບຕ ໄດ້ບັນຈຸໃນແຜນການພັດທະນາເສດຖະກິດ-ສັງຄົມ ໃນລະດັບຊາດ, ແຂວງ, ເມືອງ ແລະ ບ້ານ.

ຂ. ບັນດາແຜນການຂອງຄູ່ຮ່ວມພັດທະນາ ໄດ້ລະບຸຄວາມຕ້ອງການແກ້ໄຂບັນຫາ ລບຕ ແລະ ຄວາມຕ້ອງການທຶນຢ່າງຈະແຈ້ງ.

ຄ. ບັນດາກະຊວງ ແລະ ນິຕິບຸກຄົນ ທີ່ເປັນຈຸດປະສານງານ ໃນວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ວຽກງານການສຶກສາຄວາມສ່ຽງໄດ້ຖືກກໍານົດ ແລະ ໄດ້ຮັບການສ້າງຄວາມເຂັ້ມແຂງ.

ງ. ບັນດາກິດຈະການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການສຶກສາຄວາມສ່ຽງທັງໝົດທີ່ຈັດຕັ້ງປະຕິບັດໂດຍກະຊວງຕ່າງໆ ແລະ ນິຕິບຸກຄົນ ໄດ້ຮັບການສະໜັບສະໜູນຈາກບັນດາອົງການຈັດຕັ້ງສາກົນເພີ່ມຂຶ້ນ.

ຈ. ແຜນການທັບປ່ຽນໃນໄລຍະຍາວໃຫ້ລັດຖະບານ ເພື່ອແກ້ໄຂບັນຫາ ລບຕ ທີ່ຍັງຕົກຄ້າງໄດ້ຮັບການຮ່າງຂຶ້ນ ແລະ ຈັດຕັ້ງປະຕິບັດຢ່າງເປັນລະບົບ.

ສ. ສູນຝຶກອົບຮົມແຫ່ງຊາດຖືກສ້າງຂຶ້ນ ແລະ ບໍລິຫານ ພາຍໃຕ້ຄວາມເປັນເຈົ້າການຂອງລັດ ແລະ ມີງົບປະມານສະໜັບສະໜູນ. ພະນັກງານຂະແໜງການ ລບຕ ທັງໝົດຖືກຮັບຮູ້ ແລະ ຍົກລະດັບຜ່ານສູນຝຶກອົບຮົມແຫ່ງຊາດ.

ຊ. ຫໍພິພິດຕະພັນລະເບີດບໍ່ທັນແຕກທີ່ຕົກຄ້າງແຫ່ງຊາດ ໄດ້ຖືກສ້າງຕັ້ງຂຶ້ນ.

ຍ. ການປະກອບທຶນຈາກງົບປະມານແຫ່ງລັດ ເຂົ້າໃນແຜນການຂອງຂະແໜງການ ລບຕ ເພີ່ມຂຶ້ນ.

ດ. ການຊ່ວຍເຫຼືອທາງວິຊາການ ໄດ້ດໍາເນີນໄປຕາມແຜນການ ແລະ ຈໍານວນຊ່ຽວຊານຕ່າງປະເທດໄດ້ຫຼຸດລົງເທື່ອລະກ້າວ.

7.6 ຕົວຊີ້ວັດຜົນສໍາເລັດຂອງຄາດໝາຍ (6)

ກ. ນິຕິກໍາເພື່ອສົ່ງເສີມການຈັດຕັ້ງປະຕິບັດ ພັນທະສົນທິສັນຍາສາກົນໄດ້ຮັບຮອງ ແລະ ມີຜົນບັງຄັບໃຊ້.

ຂ. ບົດລາຍງານປະຈໍາປີ ຕໍ່ອົງການສະຫະປະຊາຊາດ ຕາມສົນທິສັນຍາຕ່າງໆຖືກສົ່ງທັນເວລາ.

ຄ. ກອງທຶນພິເສດລະຫວ່າງຊາດ ໄດ້ສ້າງຕັ້ງຂຶ້ນ ແລະ ການຊ່ວຍເຫຼືອຈາກສາກົນ ເພື່ອສະໜອງໃຫ້ແກ່ການແກ້ໄຂບັນຫາ ລບຕ ໃນຕະຫຼອດໄລຍະຂອງແຜນຍຸດທະສາດສະບັບນີ້ເພີ່ມຂຶ້ນ.

## <u>ພາກທີ VIII:</u> ການຈັດຕັ້ງ ແລະ ການປະສານງານ.

1. ຄຊກລ ໂດຍການຊີ້ນໍາຂອງທ່ານຮອງນາຍົກລັດຖະມົນຕີ ແມ່ນສະຖາບັນການຈັດຕັ້ງສູງສຸດ ໃນການຊີ້ນໍາທົ່ວຂະແໜງການ ລບຕ ແລະ ລາຍງານໂດຍກົງໃຫ້ຫ້ອງວ່າການລັດຖະບານ. ຄຊກລ ປະກອບດ້ວຍຜູ້ຕາງໜ້າຈາກກະຊວງຕ່າງໆ 17 ທ່ານ ຊຶ່ງແຕ່ງຕັ້ງໂດຍທ່ານນາຍົກລັດຖະມົນຕີ, ພາຍໃຕ້ດໍາລັດນາຍົກລັດຖະມົນຕີ ສະບັບເລກທີ 406/ນຍ, ລົງວັນທີ 8/11/2011 ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

| | |
|---|---|
| 1.1 ທ່ານລັດຖະມົນຕີປະຈຳ ຫລບ, ປະທານຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ | ເປັນປະທານ |
| 1.2 ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ | ເປັນຮອງປະທານ |
| 1.3 ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ |
| 1.4 ທ່ານຫົວໜ້າ ກົມຊ່າງແສງ ກະຊວງປ້ອງກັນປະເທດ | ເປັນກຳມະການ |
| 1.5 ທ່ານຫົວໜ້າກົມຈັດຕັ້ງສາກົນ ກະຊວງການຕ່າງປະເທດ | ເປັນກຳມະການ |
| 1.6 ທ່ານຫົວໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ |
| 1.7 ທ່ານຫົວໜ້າກົມປິ່ນປົວ ກະຊວງສາທາລະນະສຸກ | ເປັນກຳມະການ |
| 1.8 ທ່ານຫົວໜ້າກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ | ເປັນກຳມະການ |
| 1.9 ທ່ານຫົວໜ້າກົມງົບປະມານ ກະຊວງການເງິນ | ເປັນກຳມະການ |
| 1.10 ທ່ານຫົວໜ້າກົມແຜນການ-ຮ່ວມມື ກະຊວງໂຍທາທິການ ແລະ ຂົນສົ່ງ | ເປັນກຳມະການ |
| 1.11 ທ່ານຫົວໜ້າກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| 1.12 ກົມ 106 ກົມໃຫຍ່ ປກສ ກະຊວງປ້ອງກັນຄວາມສະຫງົບ | ເປັນກຳມະການ |
| 1.13 ທ່ານຮອງຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ |
| 1.14 ຮອງຫົວໜ້າກົມຈັດຕັ້ງພະນັກງານ ສູນກາງແນວລາວສ້າງຊາດ | ເປັນກຳມະການ |
| 1.15 ທ່ານຫົວໜ້າກົມອົບຮົມຂະບວນການ ສູນກາງ ຊປປ ລາວ | ເປັນກຳມະການ |
| 1.16 ທ່ານຮອງຫົວໜ້າຫ້ອງການ ສູນກາງສະຫະພັນແມ່ຍິງລາວ | ເປັນກຳມະການ |
| 1.17 ທ່ານຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ | ເປັນກຳມະການ ແລະ ທັງເປັນຫົວໜ້າກອງເລຂາ |

2. ຄຊກລ ມີຄວາມຮັບຜິດຊອບລວມ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ສະບັບນີ້ ໂດຍສະເພາະແມ່ນການສ້າງນະໂຍບາຍ, ການຈັດບູລິມະສິດ, ການຕິດຕາມຄວາມຄືບໜ້າ ແລະ ການປະສານງານ ນອກນັ້ນ, ຄຊກລ ຍັງມີໜ້າທີ່ຮັບຜິດຊອບສະເພາະ ດັ່ງນີ້:

2.1 ຄົ້ນຄ້ວາສ້າງ, ຊີ້ນຳປະຕິບັດ ແລະ ທົບທວນແຜນຍຸດທະສາດ ແກ້ໄຂບັນຫາລະເບີດບໍ່ທັນແຕກ.

2.2 ກຳນົດ ແລະ ສະໜອງທິດທາງນະໂຍບາຍ ກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກ.

2.3 ຢັ້ງຢືນ, ອອກໃບອະນຸຍາດ ແລະ ຊີ້ນຳ ບັນດາອົງການປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກ.

2.4 ສ້າງ ແລະ ຄຸ້ມຄອງຖານຂໍ້ມູນແຫ່ງຊາດ, ຈັດລຽງບູລິມະສິດ ແລະ ອື່ນໆ ກ່ຽວກັບ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ.

2.5 ປະສານງານໃນການຈັດກິດຈະກຳຕ່າງໆ ກ່ຽວກັບ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ.

2.6 ຍັ້ງຢືນຄຸນນະພາບ ຂອງບັນດາກິດຈະກຳເກັບກູ້ລະເບີດບໍ່ທັນແຕກ.

2.7 ປະເມີນຜົນກະທົບ ພາຍຫຼັງສຳເລັດການເກັບກູ້ ແລະ ວຽກງານອື່ນໆທີ່ພົວພັນກັບການເກັບກູ້ລະເບີດບໍ່ທັນແຕກ.

2.8 ສະຫຼຸບສັງລວມ ລາຍງານການປະຕິບັດ ກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກ ໃຫ້ລັດຖະບານ.

2.9 ປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆ ແຕ່ສູນກາງ-ທ້ອງຖິ່ນ, ປະເທດຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນ ຢູ່ພາຍໃນ ແລະ ຕ່າງປະເທດ ກ່ຽວກັບ ວຽກງານແກ້ໄຂບັນຫາ ລບຕ.

3. ຫ້ອງການ ຄຊກລ ເປັນກົງຈັກຊ່ວຍວຽກ ແລະ ເຮັດໜ້າທີ່ເປັນເສນາທິການໃຫ້ ຄຊກລ. ເຮັດວຽກໃກ້ສິດກັບກະຊວງການຕ່າງປະເທດ, ເປັນຈຸດປະສານງານ ສຳລັບທຸກວຽກງານທີ່ກ່ຽວຂ້ອງກັບສົນທິສັນຍາຕ້ານລະເບີດລູກຫວ່ານ ແລະ ສົນທິສັນຍາທີ່ກ່ຽວຂ້ອງອື່ນໆ. ຫ້ອງການ ຄຊກລ ມີຄວາມຮັບຜິດຊອບປະສານງານປະຈຳວັນ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ສະບັບນີ້ ແລະ ຊ່ວຍ ຄຊກລ ໃນການຊີ້ນຳທົ່ວຂະແໜງການ. ຫ້ອງການ ຄຊກລ ກະກຽມ ແລະ ສະເໜີບົດລາຍງານປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ສະບັບນີ້ໃຫ້ ຄຊກລ, ກະກຽມກອງປະຊຸມຂະແໜງການ ລບຕ ແລະ ກອງປະຊຸມທົບທວນປະຈຳປີ. ຫ້ອງການ ຄຊກລ ຕາງໜ້າລັດຖະບານແຫ່ງ ສປປ ລາວ ເປັນອົງການທີ່ມີອຳນາດຖືກຕ້ອງຕາມກົດໝາຍ ຕໍ່ບັນດາອົງການສັງກັດລັດ, ບໍ່ສັງກັດລັດ ແລະ ບໍລິສັດ ທີ່ດຳເນີນການປະຕິບັດງານແກ້ໄຂບັນຫາ ລບຕ ໃນ ສປປ ລາວ.

4. ບັນດາອົງການປະຕິບັດງານແກ້ໄຂ ລບຕ ເຮັດວຽກຕາມທິດທາງ ແລະ ການຊີ້ນຳຂອງ ຄຊກລ. ແຕ່ລະອົງການ ປະຕິບັດງານເຄື່ອນໄຫວວຽກງານຕາມພາລະບົດບາດ ແລະ ຮັບຜິດຊອບຕໍ່ຜູ້ໃຫ້ທຶນຂອງຕົນ ແລະ ຕໍ່ ຄຊກລ. ອົງການປະຕິບັດງານ ປະຕິບັດໜ້າທີ່ຂອງຕົນ ຕາມມາດຕະຖານແຫ່ງຊາດທີ່ຮັບຮອງໂດຍ ຄຊກລ. ອົງການປະຕິບັດງານ ແມ່ນໝາຍເຖິງບັນດາພາກສ່ວນ ດັ່ງລຸ່ມນີ້:

ກ. ອົງການປະຕິບັດງານ ດ້ານການສຶກສາຄວາມສ່ຽງຈາກ ລບຕ ມີອົງການປະຕິບັດງານ ພາຍໃນປະເທດ ແລະ ຕ່າງປະເທດ.

ຂ. ອົງການປະຕິບັດງານ ດ້ານການສຳຫຼວດ ແລະ ເກັບກູ້ ລບຕ ມີອົງການປະຕິບັດງານ ດ້ານມະນຸດສະທຳ, ທຸລະກິດ ແລະ ກອງທັບ, ມີອົງການປະຕິບັດງານ ພາຍໃນປະເທດ ແລະ ຕ່າງປະເທດ.

ຄ. ອົງການປະຕິບັດງານ ດ້ານການຊ່ວຍເຫຼືອຜູ້ເຄາະຮ້າຍຈາກ ລບຕ ມີອົງການປະຕິບັດງານ ພາຍໃນປະເທດ ແລະ ຕ່າງປະເທດ.

5. ພາຍໃຕ້ກອບຂອງຂະບວນການໂຕະມົນ, ກອງປະຊຸມຂະແໜງການ ລບຕ ຈະເຕົ້າໂຮມທັງພາກສ່ວນລັດ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ກ່ຽວຂ້ອງກັບຂະແໜງການ ລບຕ ເພື່ອປະສານງານການຊ່ວຍເຫຼືອສາກົນ

ໂດຍສອດຄ່ອງກັບຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ. ຄຊກລ ຊີ້ນຳສາມກຸ່ມວິຊາການ ທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ການເກັບກູ້ ລບຕ ຊຶ່ງຈະຊ່ວຍຮັບປະກັນການຊ່ວຍເຫຼືອສາກົນ ໃຫ້ສອດຄ່ອງກັບບັນດາບູລິມະສິດຂອງລັດຖະບານ ທີ່ໄດ້ກຳນົດໃນແຜນຍຸດທະສາດ ສະບັບນີ້ ແລະ ຢູ່ໃນບັນດາແຜນປະຕິບັດງານປະຈຳປີ ຂອງຂະແໜງການ ລບຕ.

6. ເພື່ອຊ່ວຍໃນການຂົນຂວາຍທຶນ ແລະ ການຄຸ້ມຄອງການຊ່ວຍເຫຼືອສາກົນ ໃນການຈັດຕັ້ງປະຕິບັດສົນທິສັນຍາຕ້ານລະເບີດລູກຫວ່ານຢ່າງເຕັມສ່ວນ ຢ່າງສອດຄ່ອງກັບຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນນັ້ນ ລັດຖະບານຕົກລົງສ້າງກອງທຶນພິເສດ ພາຍໃຕ້ການບໍລິຫານຂອງອົງການ ສປຊ. ການດຳເນີນງານກອງທຶນພິເສດ ແມ່ນຢູ່ໃນກອບໜ້າວຽກຂອງຍຸດທະສາດ ສະບັບນີ້ ແລະ ບັນດານະໂຍບາຍແກ້ໄຂບັນຫາ ລບຕ ທີ່ຖືກຮັບຮອງໂດຍ ຄຊກລ. ກອງທຶນຈະຖືກບໍລິຫານຄຸ້ມຄອງ ໂດຍຄະນະກຳມະການຊີ້ນຳພາຍໃຕ້ການເປັນປະທານຂອງລັດຖະບານ ແລະ ເຮັດວຽກໂດຍການປຶກສາຫາລືຢ່າງໃກ້ສິດກັບຂະແໜງການ ລບຕ. ໃນການໃຫ້ທຶນໃນຂະແໜງ ລບຕ ນີ້ ນອກຈາກຜ່ານກອງທຶນພິເສດແລ້ວ ຜູ້ໃຫ້ທຶນຍັງສາມາດໃຫ້ທຶນແກ່ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ໂດຍກົງໄດ້.

<u>ພາກ IX:</u> **ຄວາມຕ້ອງການດ້ານທຶນຮອນ.**

1. ຄວາມຕ້ອງການດ້ານທຶນຮອນຢ່າງລະອຽດ ຂອງຂະແໜງການ ລບຕ ຍັງບໍ່ທັນໄດ້ກຳນົດອອກແທ້ເທື່ອ ແຕ່ການປະເມີນຜົນໃນປີ 2008 ໄດ້ໃຫ້ແນວທາງທີ່ເປັນປະໂຫຍດ ກ່ຽວກັບຄວາມຕ້ອງການທຶນຮອນ ແລະ ຄວາມມີປະສິດທິຜົນ ຂອງການນຳໃຊ້ທຶນ ໃນຂະແໜງການແກ້ໄຂບັນຫາ ລບຕ ໃນ ສປປ ລາວ. ສະເພາະ 47 ເມືອງທີ່ທຸກຍາກທີ່ສຸດ ຢູ່ໃນ ສປປ ລາວ, ການສຶກສາໄດ້ເຫັນວ່າມີເນື້ອທີ່ 500.000 ເຮັກຕາ ມີລະເບີດຕົກຄ້າງ ໃນນັ້ນ ປະມານ 200.000 ເຮັກຕາ ແມ່ນເປັນເນື້ອທີ່ດິນ ທີ່ສາມາດນຳໃຊ້ເຮັດກະສິກຳ. ການສຶກສາໄດ້ໄຫ້ຂໍ້ຕົກລົງວ່າ ການເກັບກູ້ເນື້ອທີ່ດັ່ງ ແມ່ນຄຸ້ມຄ່າທາງເສດຖະກິດ, ຈາກທັດສະນະທາງການເງິນ ເຫັນໄດ້ວ່າ ຈະເປັນການໃຊ້ຈ່າຍທີ່ຄຸ້ມຄ່າ ໃສ່ການເກັບກູ້ເນື້ອທີ່ໆສາມາດເຮັດນາໄດ້ ແລະ ອີກ 20% ສຳລັບເນື້ອທີ່ທີ່ສາມາດເຮັດໄຮ່ໄດ້, 80% ຂອງເນື້ອທີ່ໆສາມາດເຮັດໄຮ່ໄດ້ ແມ່ນຕ້ອງປົດປ່ອຍເນື້ອທີ່ໂດຍຜ່ານການສຳຫຼວດທາງວິຊາການ. ອີງໃສ່ລະດັບຊັບພະຍາກອນທີ່ມີໃນປີ 2008 ອາດຈະໃຊ້ເວລາອີກ 16 ປີ ເພື່ອສຳເລັດ ການເກັບກູ້ເນື້ອທີ່ດັ່ງກ່າວ ແຕ່ຖ້ານຳໃຊ້ຊັບພະຍາກອນຫຼາຍຂຶ້ນ ແລະ ເພີ່ມສະມັດຕະພາບສູງຂຶ້ນ ຈະໃຊ້ເວລາອີກ 10 ປີ ຈຶ່ງຈະສຳເລັດໃນການເກັບກູ້ເນື້ອທີ່ດິນບູລິມະສິດດັ່ງກ່າວ.

2. ການວິເຄາະເຖິງຄວາມຄຸ້ມຄ່າ ໃນການລົງທຶນຢ່າງດຽວບໍ່ເປັນຄຳຕອບທີ່ຈະແກ້ໄຂສິ່ງທ້າທາຍຈາກ ລບຕ ທີ່ ສປປ ລາວ ປະເຊີນຢູ່ ຊຶ່ງນອກຈາກການປະຕິບັດຕາມພັນທະ ໃນສົນທິສັນຍາຕ່າງໆແລ້ວ ມັນຕ້ອງເບິ່ງບັນຫາອື່ນໆທີ່ກ່ຽວຂ້ອງກັບ ລບຕ ອີກ. ໃນນັ້ນ ມັນປະກອບດ້ວຍບັນດາສິດທິພື້ນຖານ ຂອງຊຸມຊົນທັງໝົດລວມທັງຊຸມຊົນທີ່ມີອາຊີບທຳການຜະລິດໃນເຂດເນີນສູງ ແລະ ເຂດທົ່ງພຽງ ເພື່ອເຮັດໃຫ້ເຂົາເຈົ້າດຳລົງຊີວິດ

ບັດສະຈາກຄວາມຢ້ານກົວ ແລະ ສາມາດພັດທະນາທີ່ດິນຂອງເຂົາເຈົ້າໄດ້. ພ້ອມກັນນັ້ນ, ຜົນການຄົ້ນຄວ້າໃນປີ 2008 ໄດ້ໃຫ້ຂໍ້ສະຫຼຸບອັນໜ້າສົນໃຈຫຼາຍຢ່າງ ຊຶ່ງມັນສະແດງອອກ ດັ່ງລຸ່ມນີ້:

ກ. ການກວດກູ້ເນື້ອທີ່ດິນ ທີ່ເປັນບູລິມະສິດຢູ່ ສປປ ລາວ ແມ່ນຈະສາມາດໃຫ້ປະໂຫຍດໃນແງ່ເສດຖະກິດ.

ຂ. ເພື່ອຈະກວດກູ້ເນື້ອທີ່ດິນ ທີ່ເປັນບູລິມະສິດໃຫ້ສຳເລັດ ຈະຕ້ອງໄດ້ຈັດສັນຊັບພະຍາກອນຢ່າງແທດເໝາະ ຫຼື ຖ້າມີຊັບພະຍາກອນທີ່ເໝາະສົມແລ້ວ ອາດຈະສາມາດເກັບກູ້ເນື້ອທີ່ໄດ້ເພີ່ມຂຶ້ນ.

ຄ. ມີຄວາມຈຳເປັນ ຕ້ອງເຮັດໃຫ້ແຜນຍຸດທະສາດນີ້ ສອດຄ່ອງກັບຈຸດປະສົງຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

3. ສະເພາະປີ 2008 ການປະກອບທຶນໃສ່ທົ່ວຂະແໜງການ ລບຕ ໃນ ສປປ ລາວ ທັງໝົດແມ່ນປະມານ 21 ລ້ານໂດລາສະຫະລັດ; ໃນນັ້ນ ຫຼາຍກວ່າ 8 ລ້ານໂດລາສະຫະລັດ ແມ່ນການປະກອບທຶນຜ່ານໂຄງການລົງທຶນ ຂອງໂຄງການເອກະຊົນ ແລະ ປະມານ 13 ລ້ານໂດລາສະຫະລັດ ແມ່ນການປະກອບທຶນຈາກການຊ່ວຍເຫຼືອຂອງຕ່າງປະເທດ ເພື່ອການພັດທະນາ (ໂອດີເອ). ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດສະບັບນີ້ ໃຫ້ສຳເລັດໃນໄລຍະເວລາ 10 ປີ ແມ່ນມີຄວາມຕ້ອງການການຊ່ວຍເຫຼືອຂອງສາກົນເພີ່ມຂຶ້ນ. ພ້ອມກັນນັ້ນ, ລັດຖະບານ ຈະຕ້ອງໄດ້ອຸທິດ ແລະ ໃຫ້ຄຳໝັ້ນສັນຍາປະຕິບັດຍຸດທະສາດນີ້.

<u>ພາກ X:</u> **ການຕິດຕາມກວດກາ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດ.**

1. ແຜນການປະຈຳປີ ສຳລັບຂະແໜງການ ລບຕ ແມ່ນຫ້ອງການ ຄຊກລ ຈະເປັນຜູ້ສ້າງຂຶ້ນໂດຍສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ມີການປຶກສາຫາລື ກັບບັນດາຄູ່ຮ່ວມພັດທະນາ, ທັງນີ້ກໍເພື່ອເປັນທິດທາງໃຫ້ແກ່ການຈັດຕັ້ງປະຕິບັດ ແຜນຍຸດທະສາດ ສະບັບນີ້. ໃນແຜນການປະຈຳປີດັ່ງກ່າວ ຈະກຳນົດບັນດາບູລິມະສິດປະຈຳປີ ແລະ ບັນດາຄາດໝາຍແບບສະເພາະເຈາະຈົງ ໂດຍອີງໃສ່ບັນດາຕົວຊີ້ວັດທີ່ກຳນົດຢູ່ໃນແຜນຍຸດທະສາດ ສະບັບນີ້.

2. ບັນດາອົງການປະຕິບັດງານ ຈະສະເໜີບົດລາຍງານປະຈຳປີໃຫ້ ຄຊກລ ໂດຍລະບຸບັນດາຜົນສຳເລັດຂອງໜ້າວຽກ ແລະ ຍົກໃຫ້ເຫັນສິ່ງທ້າທາຍທີ່ໄດ້ປະເຊີນ ພ້ອມທັງລາຍງານ ການນຳໃຊ້ຊັບພະຍາກອນຕ່າງໆ ໂດຍສອດຄ່ອງກັບ ແຜນການປະຈຳປີຂອງຂະແໜງການ ລບຕ. ຫ້ອງການ ຄຊກລ ຈະນຳໃຊ້ບົດລາຍງານເຫຼົ່ານີ້ ເພື່ອສ້າງເປັນບົດລາຍງານປະຈຳປີຂອງຂະແໜງການ ເພື່ອລາຍງານຕໍ່ ຄຊກລ ແລະ ກອງປະຊຸມກຸ່ມຂະແໜງການ.

3. ແຜນຍຸດທະສາດແຫ່ງຊາດ ຈະມີການປະເມີນຜົນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໃນປີ 2015 ແລະ ການປະເມີນຜົນສຸດທ້າຍໃນປີ 2020. ການປະເມີນຜົນດັ່ງກ່າວນັ້ນ ແມ່ນແນໃສ່ການປະເມີນຜົນສຳເລັດຂອງຂະແໜງການ ລບຕ ໂດຍສົມທຽບກັບບັນດາຈຸດປະສົງ ແລະ ບັນດາຕົວຊີ້ວັດ ທີ່ລະບຸຢູ່ໃນແຜນ

ຍຸດທະສາດນັ້ນ. ຄຊກລ ຈະມອບໝາຍໃຫ້ອົງການເອກະລາດ ເພື່ອດຳເນີນການປະເມີນຜົນທົ່ວຂະແໜງການ ລບຕ.

4. ບັນດາກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ, ບັນດາແຂວງ, ເທດສະບານ ແມ່ນອົງການຈັດຕັ້ງທີ່ຈະເປັນກຸນແຈ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດແຫ່ງຊາດແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.

ລັດຖະບານແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ